ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ກົມຊົນລະປະທານ

ເລກທີ 1671/ຊປທ

ນະຄອນຫຼວງວຽງຈັນ, ວັນທີ 13 MAY 2026

# ໜັງສືແຈ້ງເຊີນປະມູນ

1. ກົມຊົນລະປະທານ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະ ທີ່ດຳເນີນກິດຈະການກໍ່ສ້າງ ແລະ ສ້ອມແປງຊົນລະປະທານ ເຂົ້າຮ່ວມປະມູນ ຈັດຊື້-ຈັດຈ້າງ ການກໍ່ສ້າງໂຄງການຊົນລະປະທານ ທີ່ໄດ້ຮັບອະນຸມັດງົບປະມານລົງທຶນຂອງລັດ ປະຈຳປີ 2026 ຈຳນວນ 5 ໂຄງການ ຄື: 1) ໂຄງການ ກໍ່ສ້າງຊົນລະປະທານ ຫ້ວຍລາ ບ້ານນາໄກ່ ເມືອງແອດ ແຂວງຫົວພັນ; 2) ໂຄງການ ກໍ່ສ້າງຊົນລະປະທານ ຫ້ວຍຊາຍນ້ອຍ ບ້ານສົບລ້ອງ ເມືອງຊຽງຄໍ້ ແຂວງຫົວພັນ; 3) ໂຄງການ ກໍ່ສ້າງຊົນລະປະທານ ຫ້ວຍມອນ 1 ບ້ານສົບມອນ ເມືອງຊຽງຄໍ້ ແຂວງຫົວພັນ; 4) ໂຄງການ ກໍ່ສ້າງຊົນລະປະທານ ຫ້ວຍປຸງ ບ້ານປຸ່ງ ເມືອງວຽງໄຊ ແຂວງຫົວພັນ; 5) ໂຄງການກໍ່ສ້າງຊົນລະປະທານ ດອນຄອນລາດ ເມືອງທ່າພະບາດ ແຂວງບໍລິຄຳໄຊ.
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບວຽກງານການກໍ່ສ້າງ-ສ້ອມແປງຊົນລະປະທານ;
4. ບໍລິສັດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ພະແນກແຜນການ ແລະ ການຮ່ວມມື, ກົມຊົນລະປະທານ ຊັ້ນ 2, ບ້ານອານຸ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທ 020 5544 6691; 021 457 333, ຊຶ່ງຈະໄດ້ຂະຫຍາຍເວລາໃນການຂາຍຊອງປະມູນເລີ່ມແຕ່ ວັນທີ 13 ພຶດສະພາ 2026 ຫາ ວັນທີ 27 ພຶດສະພາ 2026 (ໃນໂມງລັດຖະການ);
5. ຊອງປະມູນ ໂຄງການ ກໍ່ສ້າງຊົນລະປະທານ ຫ້ວຍປອກ ບ້ານປຸ່ງ ເມືອງວຽງໄຊ ແຂວງຫົວພັນ ຕ້ອງສົ່ງກ່ອນເວລາ 08:30 ໂມງ ຂອງວັນທີ 27/5/2026; 2) ຊອງປະມູນ ໂຄງການ ກໍ່ສ້າງຊົນລະປະທານ ຫ້ວຍຊາຍນ້ອຍ ບ້ານສົບລ້ອງ ເມືອງຊຽງຄໍ້ ແຂວງຫົວພັນ ຕ້ອງສົ່ງກ່ອນເວລາ 10:30 ໂມງ ຂອງວັນທີ 27/5/2026; 3) ຊອງປະມູນ ໂຄງ ການ ກໍ່ສ້າງຊົນລະປະທານ ຫ້ວຍມອນ 1 ບ້ານສົບມອນ ເມືອງຊຽງຄໍ້ ແຂວງຫົວພັນ ຕ້ອງສົ່ງກ່ອນເວລາ 13:00 ໂມງ ຂອງວັນທີ 27/5/2026; 4) ຊອງປະມູນ ໂຄງການ ກໍ່ສ້າງຊົນລະປະທານ ຫ້ວຍລາ ບ້ານນາໄກ່ ເມືອງແອດ ແຂວງຫົວພັນ ຕ້ອງສົ່ງກ່ອນເວລາ 15:00 ໂມງ ຂອງວັນທີ 27/5/2026; ແລະ 5) ຊອງປະມູນ ໂຄງການກໍ່ສ້າງຊົນລະປະທານ ດອນຄອນລາດ ເມືອງທ່າພະບາດ ແຂວງບໍລິຄຳໄຊ ຕ້ອງສົ່ງກ່ອນເວລາ 08:30 ໂມງ ຂອງວັນທີ 28/5/2026 (ທີ່ຫ້ອງປະຊຸມ ກົມຊົນລະປະທານ ຊັ້ນ 2). ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກຊອງປະມູນຕ້ອງໄດ້ປະກອບໜັງສືຄໍ້າປະກັນການປະມູນດ້ວຍກຽດ ຫຼື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

ຫົວໜ້າກົມ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ
ກົມຊົນລະປະທານ

ປອ ຄຳພະຈັນ ວົງຊະນະ